ທະນາຄານແຫ່ງ ສປປ ລາວ

# ບົດລາຍງານສະຖິຕິເງິນຕາ

## ປະຈຳໄຕມາດ 2 ປີ 2022

# ສາລະບານ


I. ສະພາບລວມ ........................................................................................................1

II. ອັດຕາເງິນເຟີ້ ........................................................................................................1

III. ຂະແໜງເງິນຕາ-ການເງິນ ...........................................................................................2

3.1. ນະໂຍບາຍເງິນຕາ ແລະ ນະໂຍບາຍອັດຕາແລກປ່ຽນ .......................................................... 2

3.2. ຖານເງິນຕາ.......................................................................................................... 3

3.3. ປະລິມານເງິນ ....................................................................................................... 3

3.4. ອັດຕາດອກເບ້ຍ ..................................................................................................... 4

3.5. ເງິນຝາກ ............................................................................................................. 5

3.6. ສິນເຊື່ອ.............................................................................................................. 5

3.7. ລະບົບສະຖາບັນການເງິນ-ເງິນຕາ.................................................................................. 6

IV. ດຸນການຊໍາລະກັບຕ່າງປະເທດ .......................................................................................7

4.1. ດຸນການຊໍາລະລວມ .................................................................................................. 7

4.2. ດຸນບັນຊີຊໍາລະປົກກະຕິ ............................................................................................. 7

4.2.1 ດຸນການຄ້າດ້ານສິນຄ້າ ............................................................................................. 8

4.2.2. ດຸນການຄ້າດ້ານບໍລິການ........................................................................................... 9

4.2.3. ດຸນລາຍຮັບຂັ້ນໜຶ່ງ ................................................................................................ 9

4.2.4. ດຸນລາຍຮັບຂັ້ນສອງ ............................................................................................... 9

4.3. ດຸນບັນຊີການເງິນ.................................................................................................... 9

4.3.1 ການລົງທຶນໂດຍກົງຈາກຕ່າງປະເທດ .......................................................................10

4.3.2 ການລົງທຶນໃນຫຼັກຊັບ ແລະ ການລົງທຶນອື່ນໆ ..........................................................10

# ສາລະບານຮູບ


ຮູບທີ 1. ໂຄງປະກອບຂອງອັດຕາເງິນເຟີ້ ........ 1

ຮູບທີ 2. ອັດຕາເງິນເຟີ້ພື້ນຖານ ແລະ ບໍ່ເປັນພື້ນຖານ, ອັດຕາເງິນເຟີ້ສິນຄ້າພາຍໃນ ແລະ ສິນຄ້ານໍາເຂົ້າ ........ 2

ຮູບທີ 3. ການປ່ຽນແປງຂອງອັດຕາແລກປ່ຽນ (+) ແຂງຄ່າ ແລະ (-) ອ່ອນຄ່າ ........ 3

ຮູບທີ 4. ໂຄງປະກອບຂອງຖານເງິນຕາ ........ 3

ຮູບທີ 5. ການຂະຫຍາຍຕົວຂອງປະລິມານເງິນ M2 ........ 4

ຮູບທີ 6. ອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ຂອງ ທທກ ໄລຍະ 12 ເດືອນ ........ 5

ຮູບທີ 7. ເງິນຝາກຂອງທະນາຄານທຸລະກິດ ........ 5

ຮູບທີ 8. ການປະກອບສ່ວນຂອງສິນເຊື່ອ ແຍກຕາມຂະແໜງການ ........ 6

ຮູບທີ 9. ດຸນການຊໍາລະກັບຕ່າງປະເທດ ........ 7

ຮູບທີ 10. ໂຄງປະກອບຂອງດຸນບັນຊີຊໍາລະປົກກະຕິ ........ 8

ຮູບທີ 11. ການສົ່ງອອກ ແລະ ການນໍາເຂົ້າສິນຄ້າ ........ 9

ຮູບທີ 12. ດຸນບັນຊີການເງິນ ........ 10

# ສາລະບານຕາຕະລາງ

ຕາຕະລາງທີ 1. ດັດຊະນີລາຄາຜູ້ຊົມໃຊ້ (Consumer Price Index)....................................................11

ຕາຕະລາງທີ 2. ອັດຕາເງິນເຟີ້ (Inflation Rate)....................................................................12

ຕາຕະລາງທີ 3. ຖານະການເງິນຂອງທະນາຄານແຫ່ງ ສປປ ລາວ ..................................................... 13

ຕາຕະລາງທີ 4. ຖານະການເງິນຂອງທະນາຄານທຸລະກິດ (Commercial Banks' Survey).......................14

ຕາຕະລາງທີ 5. ຖານະການເງິນຂອງລະບົບທະນາຄານ (Monetary Survey) ..........................................15

ຕາຕະລາງທີ 6. ຊັບສິນຂອງທະນາຄານທຸລະກິດ (Assets of Commercial Banks) ................................16

ຕາຕະລາງທີ 7. ອັດຕາແລກປ່ຽນທະນາຄານທຸລະກິດ ແລະ ຕະຫຼາດ (Official and Parallel Market Exchange Rate)........................................................................................17

ຕາຕະລາງທີ 8. ອັດຕາດອກເບ້ຍສະເລ່ຍຂອງທະນາຄານທຸລະກິດ..................................................... 18

ຕາຕະລາງທີ 9. ເງິນຝາກຂອງທະນາຄານທຸລະກິດ (Commercial Bank' Deposit)................................19

ຕາຕະລາງທີ 10. ເງິນຝາກຂອງທະນາຄານທຸລະກິດ ແຍກຕາມກຸ່ມທະນາຄານ (Commercial Bank' Deposit by Bank Group).........................................................................................20

ຕາຕະລາງທີ 11. ສິນເຊື່ອຂອງທະນາຄານທຸລະກິດ (Commercial Bank' Credit).................................21

ຕາຕະລາງທີ 12. ສິນເຊື່ອຂອງທະນາຄານທຸລະກິດ ແຍກຕາມກຸ່ມທະນາຄານ (Commercial Bank' Credit by Bank Group)...........................................................................................22

ຕາຕະລາງທີ 13. ດຸນການຊໍາລະກັບຕ່າງປະເທດ (Balance Of Payments)............................................23

ຕາຕະລາງທີ 14. ການຄ້າຕ່າງປະເທດ (Foreign Trade) ...................................................................25

ຕາຕະລາງທີ 15. ທີ່ຕັ້ງສໍານັກງານຂອງແຕ່ລະທະນາຄານທຸລະກິດ (List of Commercial Banks)...............26

# ບົດນຳ

ໃນບົດລາຍງານສະຖິຕິເງິນຕາປະຈຳໄຕມາດ ແມ່ນການສັງລວມຂໍ້ມູນສະຖິຕິເງິນຕາຂອງຂະແໜງການທະນາຄານ ຊຶ່ງກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ ໄດ້ເກັບກຳສັງລວມ ແລ້ວເຜີຍແຜ່ບົດລາຍງານສະຖິຕິເງິນຕານີ້ ທາງເວັບໄຊຂອງ ທຫລ ເພື່ອໃຫ້ສັງຄົມໄດ້ນຳໃຊ້ຕາມຄວາມຈຳເປັນ ແລະ ຕ້ອງການຂອງແຕ່ລະພາກສ່ວນ.

ເຖິງຢ່າງໃດກໍຕາມ, ມີບາງຂໍ້ມູນໃນບົດລາຍງານສະບັບນີ້ ຍັງເປັນຕົວເລກຄາດຄະເນເບື້ອງຕົ້ນ ແລະ ອາດມີການປັບປຸງຂໍ້ມູນຄືນ. ສະນັ້ນ, ຂ້າພະເຈົ້າຕາງໜ້າກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ ຈຶ່ງຂໍອະໄພມາຍັງທຸກໆທ່ານມານະທີ່ນີ້ດ້ວຍ. ພ້ອມນີ້, ຂໍຮັບເອົາຄຳຕິຊົມຕ່າງໆຈາກທ່ານຜູ້ຊົມໃຊ້ດ້ວຍຄວາມຈິງໃຈ ເພື່ອການປັບປຸງບົດລາຍງານສະຖິຕິເງິນຕາສະບັບຕໍ່ໄປ ໃຫ້ມີຄວາມສົມບູນຍິ່ງຂຶ້ນ.

**ຫົວໜ້າກົມນະໂຍບາຍເງິນຕາ**

**ສຸລິສັກ ທຳມະວົງ**

# I. ສະພາບລວມ

ໃນໄຕມາດ 2 ຂອງປີ 2022, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ດຳເນີນນະໂຍບາຍເງິນຕາ ໂດຍສືບຕໍ່ນຳໃຊ້ເຄື່ອງມືທາງອ້ອມ ເປັນຕົ້ນ ແມ່ນໄດ້ຮັກສາອັດຕາດອກເບ້ຍພື້ນຖານຂອງ ທຫລ ໃນລະດັບ 3,1% ຕໍ່ປີ, ມີການປັບເພີ່ມອັດຕາສ່ວນເງິນແຮຝາກບັງຄັບຈາກລະດັບ 3% ເປັນລະດັບ 5% ສຳລັບສະກຸນເງິນກີບ ແລະ ຮັກສາໄວ້ໃນລະດັບ 5% ສຳລັບສະກຸນເງິນຕາຕ່າງປະເທດ; ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ ດ້ວຍການກຳນົດອັດຕາແລກປ່ຽນອ້າງອີງປະຈຳວັນ ເພື່ອເປັນບ່ອນອີງໃຫ້ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ; ສືບຕໍ່ຊຸກຍູ້ຕະຫຼາດເປີດ, ຕະຫຼາດລະຫວ່າງທະນາຄານ ແລະ ປະຕິບັດພາລະບົດບາດເປັນຜູ້ດັດສົມແຫຼ່ງສຸດທ້າຍຢ່າງເປັນປົກກະຕິ. ຜ່ານການຈັດຕັ້ງປະຕິບັດຄືດັ່ງກ່າວນັ້ນ ເຫັນວ່າມີຜົນໄດ້ຮັບເປັນຢ່າງດີ ສະແດງອອກປະລິມານເງິນ (M2) ເພີ່ມຂຶ້ນ 14,36%; ເງິນຝາກຂອງທະນາຄານທຸລະກິດ ເພີ່ມຂຶ້ນ 15,80%; ສິນເຊື່ອຂອງທະນາຄານທຸລະກິດ ເພີ່ມຂຶ້ນ 20,30%; ຄັງສຳຮອງເງິນຕາຕ່າງປະເທດສາມາດກຸ້ມການນຳເຂົ້າໄດ້ 3,62 ເດືອນ. ນອກຈາກນີ້, ດ້ານການຄ້າກັບຕ່າງປະເທດ ມີມູນຄ່າການຄ້າທັງໝົດ 3.748,24 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ, ການສົ່ງອອກ ມີມູນຄ່າ 1.989,52 ລ້ານໂດລາສະຫະລັດທຽບເທົ່າ, ຫຼຸດລົງ 8,69% ແລະ ການນຳເຂົ້າ ມີມູນຄ່າ 1.758,72 ລ້ານໂດລາສະຫະລັດທຽບເທົ່າ, ເພີ່ມຂຶ້ນ 2,66% ທຽບໃສ່ໄຕມາດຜ່ານມາ. ຢ່າງໃດກໍດີ ອັດຕາເງິນເຟີ້ ຢູ່ໃນລະດັບ 15,45%, ອັດຕາແລກປ່ຽນເງິນກີບທຽບເງິນໂດລາສະຫະລັດ ອ່ອນຄ່າ 18,65% ທີ່ໄດ້ຮັບຜົນກະທົບຈາກສະພາບຄວາມບໍ່ແນ່ນອນຂອງເສດຖະກິດໂລກ.

# II. ອັດຕາເງິນເຟີ້

ອັດຕາເງິນເຟີ້ໃນໄຕມາດ 2 ຂອງປີ 2022 ຢູ່ໃນລະດັບ 15,45% ເພີ່ມຂຶ້ນຈາກລະດັບ 7,37% ໃນໄຕມາດ 1/2022. ປັດໄຈທີ່ເຮັດໃຫ້ອັດຕາເງິນເຟີ້ເພີ່ມຂຶ້ນເມື່ອທຽບກັບໄຕມາດຜ່ານມາ ແມ່ນຍ້ອນການເພີ່ມຂຶ້ນຂອງລາຄາສິນຄ້າ (ທຽບກັບໄລຍະດຽວກັນຂອງໄຕມາດຜ່ານມາ) ໂດຍສະເພາະ ໃນໝວດອາຫານ ແລະ ເຄື່ອງດື່ມບໍ່ແມ່ນທາດເຫຼົ້າ ເພີ່ມຂຶ້ນຢູ່ໃນລະດັບ 10,29% ຈາກ 5,25% ເປັນຕົ້ນ ລາຄາເຂົ້າສານ, ຊີ້ນໝູ, ປາ ແລະ ຜັກສົດ; ໝວດຄົມມະນາຄົມ ແລະ ການຂົນສົ່ງເພີ່ມຂຶ້ນຢູ່ໃນລະດັບ 38,98% ຈາກ 16,05%; ໝວດເຄື່ອງນຸ່ງຫົ່ມ ແລະ ເກີບ ຢູ່ໃນລະດັບ 13,05% ຈາກ 6,60%; ໝວດທີ່ພັກອາໄສ, ນໍ້າປະປາ, ໄຟຟ້າ ແລະ ເຊື້ອເພີງຫຸງຕົ້ມ ຢູ່ໃນລະດັບ 13,48% ຈາກ 6,60%; ໝວດຮ້ານອາຫານ ແລະ ໂຮງແຮມ ຢູ່ໃນລະດັບ 12,97% ຈາກ 8,87%; ແລະ ໝວດສິນຄ້າ ແລະ ບໍລິການອື່ນໆ ຢູ່ໃນລະດັບ 22,25% ຈາກ 10,33%.

**ຮູບທີ 1. ໂຄງປະກອບຂອງອັດຕາເງິນເຟີ້**




**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

**ຮູບທີ 2. ອັດຕາເງິນເຟີ້ພື້ນຖານ ແລະ ບໍ່ເປັນພື້ນຖານ, ອັດຕາເງິນເຟີ້ສິນຄ້າພາຍໃນ ແລະ ສິນຄ້ານຳເຂົ້າ**




**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

# III. ຂະແໜງເງິນຕາ-ການເງິນ

## 3.1. ນະໂຍບາຍເງິນຕາ ແລະ ນະໂຍບາຍອັດຕາແລກປ່ຽນ

ໃນໄຕມາດ 2 ຂອງປີ 2022, ທຫລ ໄດ້ປັບຂຶ້ນອັດຕາດອກເບ້ຍພື້ນຖານຂອງ ທຫລ ຈາກລະດັບ 3% ຕໍ່ປີ ເປັນ 3,1% ຕໍ່ປີ[1], ປັບເພີ່ມອັດຕາເງິນແຮຝາກບັງຄັບຈາກ 3% ເປັນ 5% ສຳລັບສະກຸນເງິນກີບ ແລະ ສືບຕໍ່ຮັກສາໄວ້ໃນລະດັບ 5% ສຳລັບເງິນຕາຕ່າງປະເທດ[2]. ນອກຈາກນັ້ນ, ທຫລ ໄດ້ນຳໃຊ້ມາດຕະການຄຸ້ມຄອງປະລິມານເງິນດ້ວຍການອອກຈຳໜ່າຍພັນທະບັດ ທຫລ ໄລຍະສັ້ນ 6 ເດືອນ ສະກຸນເງິນກີບ ງວດທີ 1 ຈຳນວນ 5.000 ຕື້ກີບ[3] ໃນອັດຕາດອກເບ້ຍ 20% ຕໍ່ປີ ເພື່ອຈຳໜ່າຍໃຫ້ມວນຊົນ.

ສຳລັບນະໂຍບາຍອັດຕາແລກປ່ຽນ, ທຫລ ໄດ້ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດ ທີ່ມີການຄຸ້ມຄອງຂອງລັດໃນທິດທາງທີ່ມີຄວາມຍືດຍຸ່ນຫຼາຍກວ່າເກົ່າ ໂດຍການຮັກສາຂອບອັດຕາແລກປ່ຽນຊື້ ຫຼື ຂາຍ ໃນລະດັບບໍ່ເກີນ ±1,50% ທຽບໃສ່ອັດຕາແລກປ່ຽນອ້າງອີງ ທີ່ກົມນະໂຍບາຍເງິນຕາ ກຳນົດອອກໃນແຕ່ລະວັນ, ຮັກສາສ່ວນຕ່າງລະຫວ່າງອັດຕາຊື້ ແລະ ອັດຕາຂາຍ ບໍ່ເກີນ 0,50% ສຳລັບເງິນກີບທຽບໂດລາ, ບໍ່ເກີນ 0,75% ສຳລັບເງິນກີບທຽບກັບເອີໂຣ ແລະ ເງິນກີບທຽບກັບບາດ ແລະ ບໍ່ເກີນ 2% ສຳລັບເງິນກີບກັບເງິນຢວນ ແລະ ເງິນຕາສະກຸນອື່ນໆ.

ຜ່ານການຈັດຕັ້ງປະຕິບັດຄືດັ່ງກ່າວນັ້ນໄດ້ຊ່ວຍໃນການຊະລໍການອ່ອນຄ່າຂອງອັດຕາແລກປ່ຽນສະເລ່ຍທົ່ວລະບົບ ເງິນກີບສະເລ່ຍຢູ່ໃນລະດັບ 14.340,63 ກີບ/ໂດລາ ອ່ອນຄ່າ 18,65% ທຽບໃສ່ໄຕມາດຜ່ານມາ ແລະ ເງິນກີບທຽບເງິນບາດ ສະເລ່ຍຢູ່ໃນລະດັບ 441,04 ກີບ/ບາດ ອ່ອນຄ່າ 18,86% ທຽບໃສ່ໄຕມາດຜ່ານມາ, ພ້ອມດຽວກັນນີ້ ພາຍຫຼັງອອກພັນທະບັດໃນທ້າຍເດືອນສຸດທ້າຍຂອງໄຕມາດ ແມ່ນຄາດວ່າຈະເປັນໜຶ່ງເຄື່ອງມືເງິນຕາສຳຄັນໃນການຊ່ວຍຫຼຸດຜ່ອນການອ່ອນຄ່າຂອງເງິນກີບລົງໃນໄຕມາດຖັດໄປ.

---

[1] ອີງຕາມຂໍ້ຕົກລົງວ່າດ້ວຍການປັບປຸງອັດຕາດອກເບ້ຍພື້ນຖານຂອງທະນາຄານແຫ່ງ ສປປ ລາວ, ສະບັບເລກທີ 376/ທຫລ, ລົງວັນທີ 17 ພຶດສະພາ 2022.

[2] ອີງຕາມຂໍ້ຕົກລົງວ່າດ້ວຍການປັບປຸງອັດຕາສ່ວນເງິນແຮຝາກບັງຄັບ, ສະບັບເລກທີ 375/ທຫລ, ລົງວັນທີ 17 ພຶດສະພາ 2022.

[3] ແຈ້ງການຈຳໜ່າຍພັນທະບັດ ທະນາຄານແຫ່ງ ສປປ ລາວ ສະກຸນເງິນກີບ (ງວດທີ 1 ຄັ້ງວັນທີ 15 ມິຖຸນາ 2022), ສະບັບເລກທີ 200/ຫກ, ລົງວັນທີ 13 ມິຖຸນາ 2022.

**ຮູບທີ 3. ການປ່ຽນແປງຂອງອັດຕາແລກປ່ຽນ (+) ແຂງຄ່າ ແລະ (-) ອ່ອນຄ່າ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.2. ຖານເງິນຕາ

ຮອດທ້າຍໄຕມາດ 2 ປີ 2022, ຖານເງິນຕາ ມີຍອດເຫຼືອ 43.625,06 ຕື້ກີບ ເພີ່ມຂຶ້ນ 4,42% ເມື່ອທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ 27,31% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ອົງປະກອບຂອງຖານເງິນຕາ ເຫັນວ່າ ເງິນຝາກຂອງ ທທກ ຢູ່ ທຫລ ເພີ່ມຂຶ້ນ 9,12% ແຕ່ເງິນສົດໃນຍອດຈໍລະຈອນ ຫຼຸດລົງ 6,03%. ສາເຫດຕົ້ນຕໍຍ້ອນ: ທຫລ ສືບຕໍ່ປະຕິບັດໂຄງການສິນເຊື່ອເພື່ອຊຸກຍູ້ການຜະລິດ ແລະ ແກ້ໄຂຜົນກະທົບຈາກພະຍາດໂຄວິດ-19.

**ຮູບທີ 4. ໂຄງປະກອບຂອງຖານເງິນຕາ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.3. ປະລິມານເງິນ

ປະລິມານເງິນ M2 ມີຍອດທັງໝົດ 168.658,52 ຕື້ກີບ ເພີ່ມຂຶ້ນ 14,36% ເມື່ອທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ 42,87% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ, ກວມເອົາ 78,22% ຕໍ່ GDP ສາເຫດຕົ້ນຕໍຍ້ອນ ການປ່ອຍສິນເຊື່ອໃຫ້ພາກສ່ວນເສດຖະກິດ ແລະ ການອ່ອນຄ່າຂອງເງິນກີບກະທົບຕໍ່ເງິນຝາກທີ່ເປັນເງິນຕາຕ່າງປະເທດ.

ອົງປະກອບຂອງປະລິມານເງິນ ປະກອບມີ: ເງິນຝາກເປັນເງິນກີບ ກວມເອົາ 32,63%, ເງິນຝາກເປັນສະກຸນເງິນຕາຕ່າງປະເທດ ກວມເອົາ 61,93% ແລະ ເງິນຢູ່ນອກລະບົບທະນາຄານ ກວມເອົາ 5,44%, ດຽວກູ່ກັນນີ້ພາຍຫຼັງອອກພັນທະບັດໃນທ້າຍເດືອນສຸດທ້າຍຂອງໄຕມາດ ກໍຄາດວ່າຈະເປັນໜຶ່ງເຄື່ອງມືເງິນຕາສຳຄັນໃນການຊ່ວຍຊະລໍການເພີ່ມຂຶ້ນຂອງປະລິມານເງິນໃນໄຕມາດຖັດໄປ.

**ຮູບທີ 5. ການຂະຫຍາຍຕົວຂອງປະລິມານເງິນ M2**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ

## 3.4. ອັດຕາດອກເບ້ຍ

ໃນໄຕມາດນີ້, ອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ຂອງທະນາຄານທຸລະກິດ ແມ່ນມີການປ່ຽນແປງເລັກໜ້ອຍ, ໃນນີ້ ອັດຕາດອກເບ້ຍມີກຳນົດ ໄລຍະເວລາ 1 ປີ ສະກຸນເງິນກີບ ໄດ້ເພີ່ມຂຶ້ນຈາກ 5,32% ມາເປັນ 5,34% ຕໍ່ປີ, ແຕ່ສະກຸນເງິນບາດ ຍັງຄົງທີ່ໃນອັດຕາ 3,37% ຕໍ່ປີ ແລະ ສະກຸນເງິນໂດລາສະຫະລັດ ໄດ້ເພີ່ມຈາກ 3,31% ມາເປັນ 3,75% ຕໍ່ປີ. ພ້ອມດຽວກັນນີ້ ອັດຕາດອກເບ້ຍເງິນກູ້ຂອງທະນາຄານທຸລະກິດ ໄລຍະສັ້ນ 1 ປີ ຂອງລູກຄ້າຊັ້ນດີ ສະກຸນເງິນກີບ ເພີ່ມຂຶ້ນຈາກ 9,76% ມາເປັນ 9,79% ຕໍ່ປີ, ສະກຸນເງິນບາດ ເພີ່ມຂຶ້ນຈາກ 8,38% ມາເປັນ 8,39% ຕໍ່ປີ ແລະ ສະກຸນເງິນໂດລາສະຫະລັດ ຍັງຄົງທີ່ໃນອັດຕາ 8,05% ຕໍ່ປີ.

**ຮູບທີ 6. ອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ຂອງ ທທກ ໄລຍະ 12 ເດືອນ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.5. ເງິນຝາກ

ຮອດໄຕມາດ 2 ປີ 2022 ເງິນຝາກຂອງທະນາຄານທຸລະກິດ (ບໍ່ລວມເງິນຝາກຂອງຜູ້ບໍ່ມີພູມລຳເນົາຢູ່ ສປປ ລາວ) ມີຍອດທັງໝົດ 159.442,14 ຕື້ກີບ ເພີ່ມຂຶ້ນ 15,80% ເມື່ອທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ 45,44% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ໃນນັ້ນ, ເງິນຝາກເປັນສະກຸນເງິນກີບ ເພີ່ມຂຶ້ນ 1,49% ກວມເອົາ 34,50% ຂອງເງິນຝາກທັງໝົດ ແລະ ເງິນຝາກເປັນສະກຸນເງິນຕາຕ່າງປະເທດ ເພີ່ມຂຶ້ນ 25,10% ກວມເອົາ 65,50% ຂອງເງິນຝາກທັງໝົດ.

**ຮູບທີ 7. ເງິນຝາກຂອງທະນາຄານທຸລະກິດ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.6. ສິນເຊື່ອ

ສິນເຊື່ອຂອງທະນາຄານທຸລະກິດ ຮອດໄຕມາດ 2 ປີ 2022 ມີຍອດທັງໝົດ 112.590,86 ຕື້ກີບ ກວມເອົາ 79,41% ຕໍ່ GDP[4] ທີ່ຂະຫຍາຍຕົວເພີ່ມຂຶ້ນ 20,30% ເມື່ອທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ 43,84% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ໃນນັ້ນ, ສິນເຊື່ອທີ່ສະໜອງໃຫ້ຂະແໜງສະໜອງວັດຖຸ ແລະ ເຕັກນິກ

[4] GDP ປີ 2022 = 215.609 ຕື້ກີບ

ຂະຫຍາຍຕົວ 85,35%, ຂະແໜງຂົນສົ່ງ 23,48%, ຂະແໜງອຸດສາຫະກຳ 22,15%, ຂະແໜງການຄ້າ 21,33%, ຂະແໜງການອື່ນໆ 19,35%, ຂະແໜງການບໍລິການ 18,04% ແລະ ຂະແໜງການກໍ່ສ້າງ 15,24%. ໃນຂະນະດຽວກັນ, ສິນເຊື່ອບາງຂະແໜງການຂະຫຍາຍຕົວຫຼຸດລົງ ເປັນຕົ້ນ ຂະແໜງກະສິກຳ 3,11% ແລະ ຂະແໜງຫັດຖະກຳ 2,10%.

**ຮູບທີ 8. ການປະກອບສ່ວນຂອງສິນເຊື່ອ ແຍກຕາມຂະແໜງການ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.7. ລະບົບສະຖາບັນການເງິນ-ເງິນຕາ

ຮອດທ້າຍໄຕມາດ 2 ປີ 2022, ລະບົບສະຖາບັນການເງິນ-ເງິນຕາ ປະກອບມີທະນາຄານທຸລະກິດ ຈຳນວນ 44 ແຫ່ງ (ຕາຕະລາງທີ 15), ພ້ອມນີ້ ມີ 114 ສາຂາ ຂອງທະນາຄານທຸລະກິດ; 543 ໜ່ວຍບໍລິການ; 33 ໜ່ວຍແລກປ່ຽນເງິນຕາ; ຕູ້ ATM 1.439 ໜ່ວຍ; ເຄື່ອງຮູດບັດ EDC ຈຳນວນ 4.554 ເຄື່ອງ ຢູ່ໃນຂອບເຂດທົ່ວປະເທດ ແລະ ບັດ ATM ຈຳນວນ 2.237.171 ບັດ. ສຳລັບສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ມີທັງໝົດ 234 ແຫ່ງ (ເພີ່ມຂຶ້ນ 9 ແຫ່ງ ໃນໄຕມາດ 2) ໃນນັ້ນ, ມີສະຖາບັນການເງິນທີ່ຮັບຝາກ 20 ແຫ່ງ, ສະຖາບັນການເງິນທີ່ບໍ່ຮັບຝາກ 105 ແຫ່ງ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ 35 ແຫ່ງ, ບໍລິສັດເຊົ່າສິນເຊື່ອ 29 ແຫ່ງ ແລະ ໂຮງຊວດຈຳ 45 ແຫ່ງ. ນອກຈາກນີ້ ທຫລ ຍັງແນໃສ່ເຮັດໃຫ້ທະນາຄານ ແລະ ສະຖາບັນການເງິນມີຄວາມເຂັ້ມແຂງ ໂດຍໄດ້ອອກນິຕິກຳລຸ່ມກົດໝາຍຫຼາຍສະບັບ ເປັນຕົ້ນ ພາຍໃນໄຕມາດນີ້ ແມ່ນໄດ້ອອກຂໍ້ຕົກລົງ ວ່າດ້ວຍມາດຕະການຕໍ່ການລະເມີດຂອງທະນາຄານທຸລະກິດ ແນ່ໃສ່ເຮັດໃຫ້ທະນາຄານທຸລະກິດທົ່ວລະບົບມີຄວາມໝັ້ນຄົງ ປະກອບສ່ວນເຂົ້າໃນການຮັກສາສະຖຽນລະພາບການເງິນ-ເງິນຕາ[5]; ຂໍ້ຕົກລົງວ່າດ້ວຍ ມາດຕະການແກ່ຫົວທີ່ຕໍ່ສະຖາບັນການເງິນ[6].

ສຳລັບວຽກງານຕະຫຼາດຫຼັກຊັບ, ຮອດທ້າຍໄຕມາດ 2 ປີ 2022, ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ມີທັງໝົດ 11 ບໍລິສັດ ເຊິ່ງດັດຊະນີຕະຫຼາດຫຼັກຊັບລາວ ໃນໄຕມາດນີ້ ປິດຢູ່ທີ່ 568,80 ຈຸດ ຫຼຸດລົງ -7,76% ທຽບໃສ່ໄຕມາດທີ່ຜ່ານມາ, ມີມູນຄ່າການຊື້-ຂາຍທັງໝົດ 9,43 ຕື້ກີບ ເພີ່ມຂຶ້ນ 29,20% ເມື່ອທຽບໃສ່ໄຕມາດ 1 ປີ 2023, ໃນນັ້ນ ການຊື້-ຂາຍຮຸ້ນຂອງຜູ້ລົງທຶນຕ່າງປະເທດກວມເອົາ 66,47% ເພີ່ມຂຶ້ນ 29,19% ທຽບໃສ່ໄຕມາດຜ່ານມາ. ສັງເກດເຫັນວ່າ ດັດຊະນີຕະຫຼາດຫຼັກຊັບ ປັບຕົວລົງເລັກໜ້ອຍ ຍ້ອນລາຄາຮຸ້ນຫຼາຍໆຕົວ ໃນຕະຫຼາດ

---

[5] ຂໍ້ຕົກລົງສະບັບເລກທີ 400/ທຫລ, ລົງວັນທີ 30 ພຶດສະພາ 2022.
[6] ຂໍ້ຕົກລົງສະບັບເລກທີ 374/ທຫລ, ລົງວັນທີ 16 ພຶດສະພາ 2022.

ຫຼັກຊັບໄດ້ປັບຕົວລົງ ໂດຍສະເພາະ ແມ່ນຮຸ້ນ BCEL ບວກກັບສະພາບການຊື້-ຂາຍ ທີ່ຫຼຸດລົງຈາກ ທ້າຍເດືອນທ້າຍປີ 2021 ທີ່ຜ່ານມາ ຈຶ່ງເຮັດໃຫ້ດັດຊະນີຕະຫຼາດຫຼັກຊັບ ບໍ່ສາມາດກັບຂຶ້ນມາບວກໄດ້.

# IV. ດຸນການຊໍາລະກັບຕ່າງປະເທດ

## 4.1. ດຸນການຊໍາລະລວມ

ດຸນການຊໍາລະກັບຕ່າງປະເທດ ປະຈໍາໄຕມາດ 2 ປີ 2022 ເກີນດຸນ 5,79 ລ້ານໂດລາສະຫະລັດ. ໃນນັ້ນ, ດຸນບັນຊີຊໍາລະປົກກະຕິ ຂາດດຸນ 33,62 ລ້ານໂດລາສະຫະລັດ, ສ່ວນດຸນບັນຊີການເງິນມີກະແສເງິນໄຫຼເຂົ້າສຸດທິ 137,91 ລ້ານໂດລາສະຫະລັດ. ໃນຂະນະທີ່, ຄັງສໍາຮອງເງິນຕາຕ່າງປະເທດ ໃນທ້າຍໄຕມາດ 2 ປີ 2022 ຍອດເຫຼືອ 1.295,90 ລ້ານໂດລາສະຫະລັດ ສາມາດກຸ້ມການນໍາເຂົ້າໄດ້ 3,62 ເດືອນ[7].

**ຮູບທີ 9. ດຸນການຊໍາລະກັບຕ່າງປະເທດ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 4.2. ດຸນບັນຊີຊໍາລະປົກກະຕິ

ດຸນບັນຊີຊໍາລະປົກກະຕິ ຂາດດຸນ ໃນລະດັບ 33,62 ລ້ານໂດລາສະຫະລັດ ຈາກເກີນດຸນ 243,20 ລ້ານໂດລາສະຫະລັດໃນໄຕມາດ 1 ປີ 2022. ສາເຫດຫຼັກແມ່ນຍ້ອນດຸນການຄ້າດ້ານສິນຄ້າ ເກີນດຸນຫຼຸດລົງ 50,45%, ດຸນການຄ້າດ້ານບໍລິການ ຂາດດຸນເພີ່ມຂຶ້ນ 32,66% ແລະ ດຸນລາຍຮັບຂັ້ນໜຶ່ງ ຂາດດຸນເພີ່ມຂຶ້ນ 20,56%. ໃນຂະນະທີ່ດຸນລາຍຮັບຂັ້ນສອງ ເກີນດຸນ ເພີ່ມຂຶ້ນ 33,51% ເມື່ອທຽບໃສ່ໄຕມາດຜ່ານມາ (ຮູບສະແດງ 10).

[1] ມູນຄ່າສິນຄ້ານໍາເຂົ້າສະເລ່ຍຕໍ່ເດືອນໃນປີ 2022 ແມ່ນນໍາໃຊ້ 357.14 ລ້ານໂດລາສະຫະລັດ (ຕົວເລກຄາດຄະເນ) ເຊິ່ງບໍ່ລວມສິນຄ້າທີ່ມີແຫຼ່ງທຶນຮອງຮັບຢູ່ຕ່າງປະເທດ, ໃນນັ້ນ ລວມມີ ສິນຄ້າທີ່ໄດ້ຮັບນະໂຍບາຍການສົ່ງເສີມການລົງທຶນ ປະກອບດ້ວຍ ລະຫັດເສຍພາສີຫຼຸດຜ່ອນຕາມນະໂຍບາຍສົ່ງເສີມການລົງທຶນ; ເສຍພາສີ, ຍົກເວັ້ນອາກອນ ແລະ ພັນທະອື່ນໆຕາມກົດໝາຍສົ່ງເສີມການລົງທຶນ; ຍົກເວັ້ນອາກອນມູນຄ່າເພີ່ມ, ເສຍພາສີ ແລະ ພັນທະອື່ນໆຕາມກົດຫມາຍສົ່ງເສີມລົງທຶນ ແລະ ອື່ນໆ.

ຮູບທີ 10. ໂຄງປະກອບຂອງດຸນບັນຊີຊຳລະປົກກະຕິ




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

### 4.2.1 ດຸນການຄ້າດ້ານສິນຄ້າ

ດຸນການຄ້າດ້ານສິນຄ້າ ເກີນດຸນ 230,80 ລ້ານໂດລາສະຫະລັດ ເກີນດຸນຫຼຸດລົງ 50,45% ເມື່ອທຽບໃສ່ໄຕມາດຜ່ານມາ. ຍ້ອນມີການສົ່ງອອກ ຫຼຸດລົງ 8,69% ໃນຂະນະທີ່ການນຳເຂົ້າ ເພີ່ມຂຶ້ນ 2,66% ເມື່ອທຽບໃສ່ໄຕມາດຜ່ານມາ (ຮູບສະແດງ 11).

**ການສົ່ງອອກ:** ມີມູນຄ່າ 1.989,52 ລ້ານໂດລາສະຫະລັດ ຫຼຸດລົງ 8,69% ເມື່ອທຽບໃສ່ໄຕມາດຜ່ານມາ ແຕ່ເພີ່ມຂຶ້ນ 8,02% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ, ສິນຄ້າສົ່ງອອກຫຼຸດລົງໃນໄຕມາດນີ້ ເປັນຕົ້ນ: ຜະລິດຕະພັນກະສິກຳ; ຮອງລົງມາແມ່ນຜະລິດຕະພັນບໍ່ແຮ່; ຜະລິດຕະພັນໄມ້, ເຍື່ອໄມ້ ແລະ ເຈ້ຍ ແລະ ຜະລິດຕະພັນພລາສຕິກ. ສິນຄ້າສົ່ງອອກຫຼັກປະກອບມີ: ກະແສໄຟຟ້າ ກວມເອົາ 31,60 %; ຮອງລົງມາແມ່ນຜະລິດຕະພັນບໍ່ແຮ່ ກວມ 24,96%; ຜະລິດຕະພັນໄມ້, ເຍື່ອໄມ້ ແລະ ເຈ້ຍ ກວມ 10,37%; ຜະລິດຕະພັນກະສິກຳ ກວມ 9,68% ແລະ ອາຫານປຸງແຕ່ງ, ເຄື່ອງດື່ມ ແລະ ຢາສູບ ກວມ 5,83% ຂອງການສົ່ງອອກທັງໝົດ.

**ການນຳເຂົ້າ:** ມີມູນຄ່າ 1.758,72 ລ້ານໂດລາສະຫະລັດ ເພີ່ມຂຶ້ນ 2,66% ທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ 13,45% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສິນຄ້ານຳເຂົ້າເພີ່ມຂຶ້ນໃນໄຕມາດນີ້ ລວມມີ: ເຄື່ອງໄຟຟ້າ ແລະ ອຸປະກອນເຄື່ອງໃຊ້ໄຟຟ້າອື່ນໆ; ຮອງລົງມາແມ່ນນ້ຳມັນດິບ, ນ້ຳມັນເຊື້ອໄຟ, ນ້ຳມັນເຄື່ອງ ແລະ ອື່ນໆ; ອາຫານ, ເຄື່ອງດື່ມ, ຢາ ແລະ ເຄື່ອງໃຊ້ສອຍທົ່ວໄປ; ແລະ ສັດທີ່ມີຊີວິດ ເປັນຕົ້ນ. ສິນຄ້ານຳເຂົ້າຫຼັກ ເຊັ່ນ: ນ້ຳມັນດິບ, ນ້ຳມັນເຊື້ອໄຟ, ນ້ຳມັນເຄື່ອງ ແລະ ອື່ນໆ ກວມເອົາ 18,69%; ຮອງລົງມາແມ່ນອາຫານ, ເຄື່ອງດື່ມ, ຢາ ແລະ ເຄື່ອງໃຊ້ສອຍທົ່ວໄປ ກວມເອົາ 15,85%; ຍານພາຫະນະ ແລະ ອຸປະກອນກ່ຽວຂ້ອງ ກວມເອົາ 9,60%; ເຄື່ອງໄຟຟ້າ ແລະ ອຸປະກອນເຄື່ອງໃຊ້ໄຟຟ້າອື່ນໆ ກວມເອົາ 8,91%; ຜະລິດຕະພັນໄມ້, ເຍື່ອໄມ້ ແລະ ເຈ້ຍ ກວມເອົາ 7,80% ຂອງການນຳເຂົ້າທັງໝົດ.

**ຮູບທີ 11. ການສົ່ງອອກ ແລະ ການນຳເຂົ້າສິນຄ້າ**




### 4.2.2. ດຸນການຄ້າດ້ານບໍລິການ

ດຸນການຄ້າດ້ານບໍລິການ ຂາດດຸນ 43,32 ລ້ານໂດລາສະຫະລັດ, ເມື່ອທຽບໃສ່ໄຕມາດຜ່ານມາ ຂາດດຸນເພີ່ມຂຶ້ນ 32,66% ແລະ ຂາດດຸນເພີ່ມຂຶ້ນ 62,70% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດຕົ້ນຕໍແມ່ນ ຍ້ອນລາຍຈ່າຍຂະແໜງບໍລິການທ່ອງທ່ຽວ, ຂະແໜງການບໍລິການດ້ານການຂົນສົ່ງສິນຄ້າ ແລະ ຂະແໜງບໍລິການການກໍ່ສ້າງ ເພີ່ມຂຶ້ນ (ຮູບສະແດງ 10).

### 4.2.3. ດຸນລາຍຮັບຂັ້ນໜຶ່ງ

ລາຍຮັບຂັ້ນໜຶ່ງ ສຸດທິ ຂາດດຸນ 302,52 ລ້ານໂດລາສະຫະລັດ, ຂາດດຸນເພີ່ມຂຶ້ນ 20,56% ທຽບໃສ່ໄຕມາດຜ່ານມາ ແລະ ຂາດດຸນເພີ່ມຂຶ້ນ 35,73% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດຍ້ອນການຊຳລະດອກເບ້ຍເງິນກູ້ຢືມຈາກຕ່າງປະເທດຂອງພາກລັດຖະບານ, ໂອນກຳໄລ ແລະ ເງິນປັນຜົນ ຂອງພາກເອກະຊົນ ເພີ່ມຂຶ້ນ (ຮູບສະແດງ 10).

### 4.2.4. ດຸນລາຍຮັບຂັ້ນສອງ

ລາຍຮັບຂັ້ນສອງ ສຸດທິ ເກີນດຸນ 81,41 ລ້ານໂດລາສະຫະລັດ, ເກີນດຸນເພີ່ມຂຶ້ນ 33,51% ທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ 50,78% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດຍ້ອນລາຍຮັບເງິນຊ່ວຍເຫຼືອລ້າພາກລັດຖະບານ ເພີ່ມຂຶ້ນເມື່ອທຽບໃສ່ໄຕມາດຜ່ານມາ (ຮູບສະແດງ 10).

## 4.3. ດຸນບັນຊີການເງິນ

ດຸນບັນຊີການເງິນໃນໄຕມາດ 2 ປີ 2022 ມີກະແສເງິນໄຫຼເຂົ້າສຸດທິ 137,91 ລ້ານໂດລາສະຫະລັດ ເມື່ອທຽບໃສ່ໄຕມາດຜ່ານມາ ທີ່ມີກະແສເງິນໄຫຼອອກສຸດທິ 14,82 ລ້ານໂດລາສະຫະລັດ. ສາເຫດຕົ້ນຕໍແມ່ນກະແສເງິນລົງທຶນໂດຍກົງຈາກຕ່າງປະເທດ ໄຫຼເຂົ້າສຸດທິ 141,59 ລ້ານໂດລາສະຫະລັດ ແລະ ກະແສເງິນລົງທຶນອື່ນໄຫຼເຂົ້າສຸດທິ 31,43 ລ້ານໂດລາສະຫະລັດ. ໃນຂະນະທີ່ກະແສເງິນລົງທຶນໃນຫຼັກຊັບ ໄຫຼອອກສຸດທິ 35,12 ລ້ານໂດລາສະຫະລັດ (ຮູບສະແດງ 12).

### 4.3.1 ການລົງທຶນໂດຍກົງຈາກຕ່າງປະເທດ

ການລົງທຶນໂດຍກົງຈາກຕ່າງປະເທດ ມີກະແສເງິນໄຫຼເຂົ້າສຸດທິ 141,59 ລ້ານໂດລາສະຫະລັດ ຫຼຸດລົງ 11,68% ທຽບໃສ່ໄຕມາດຜ່ານມາ ແລະ ຫຼຸດລົງ 30,09% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດ ຍ້ອນກະແສເງິນລົງທຶນໃນຂະແໜງການອຸດສາຫະກຳປຸງແຕ່ງຫຼຸດລົງ. ໃນໄຕມາດນີ້, ຂະແໜງການທີ່ມີກະແສເງິນ ລົງທຶນໂດຍກົງຈາກຕ່າງປະເທດ ຫຼາຍກວ່າໝູ່ແມ່ນຂະແໜງການເງິນ ກວມເອົາ 65,41%, ຂະແໜງການກໍ່ສ້າງ ກວມເອົາ 19,59% ແລະ ຂະແໜງການເຄື່ອນໄຫວບໍລິການອື່ນໆ ກວມເອົາ 2,91% ຂອງກະແສເງິນລົງທຶນໂດຍ ກົງຈາກຕ່າງປະເທດທັງໝົດ. ສ່ວນປະເທດທີ່ມາລົງທຶນຫຼາຍທີ່ສຸດແມ່ນປະເທດ ສປ. ຈີນ ກວມເອົາ 77,07%, ສສ.ຫວຽດນາມ ກວມເອົາ 9,96% ແລະ ປະເທດໄທ ກວມເອົາ 4,46%.

### 4.3.2 ການລົງທຶນໃນຫຼັກຊັບ ແລະ ການລົງທຶນອື່ນໆ

ການລົງທຶນໃນຫຼັກຊັບ ມີກະແສເງິນໄຫຼອອກສຸດທິ 35,12 ລ້ານໂດລາສະຫະລັດ ຍ້ອນທະນາຄານທຸລະກິດ ລົງທຶນໃນຫຼັກຊັບຕ່າງປະເທດເພີ່ມຂຶ້ນ. ສ່ວນການລົງທຶນອື່ນໆ ແມ່ນມີກະແສເງິນໄຫຼເຂົ້າສຸດທິ 31,43 ລ້ານໂດລາ ສະຫະລັດ ຍ້ອນທະນາຄານທຸລະກິດກູ້ຢືມຈາກຕ່າງປະເທດເພີ່ມຂຶ້ນສຸດທິ ເມື່ອທຽບໃສ່ໄຕມາດຜ່ານມາ.

**ຮູບທີ 12. ດຸນບັນຊີການເງິນ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

# ຕາຕະລາງທີ 1. ດັດຊະນີລາຄາຜູ້ຊົມໃຊ້ (Consumer Price Index)

| ໝວດສິນຄ້າ | ໄຕມາດ 2/2021 | ໄຕມາດ 3/2021 | ໄຕມາດ 4/2021 | ໄຕມາດ 1/2022 | ໄຕມາດ 2/2022 |
|---|---|---|---|---|---|
| **ດັດຊະນີລາຄາຜູ້ຊົມໃຊ້ລວມ 12 ໝວດສິນຄ້າ** | **116,37** | **119,18** | **120,16** | **122,42** | **134,35** |
| **ເງິນເຟີ້ລວມ, ບໍ່ລວມນໍ້າມັນເຊື້ອໄຟ** | **116,00** | **118,78** | **119,42** | **121,17** | **132,18** |
| **ເງິນເຟີ້ລວມ, ບໍ່ລວມອາຫານສົດ** | **112,31** | **115,19** | **118,10** | **121,69** | **135,32** |
| **ເງິນເຟີ້ລວມ, ບໍ່ລວມນໍ້າມັນເຊື້ອໄຟ ແລະ ອາຫານສົດ** | **111,21** | **113,87** | **116,23** | **118,88** | **130,61** |
| **ດັດຊະນີແຕ່ລະໝວດສິນຄ້າ** | | | | | |
| 1. ໝວດສະບຽງອາຫານ ແລະ ເຄື່ອງດື່ມບໍ່ແມ່ນເຫຼົ້າ | 121,46 | 124,35 | 123,04 | 123,77 | 133,96 |
| 2. ໝວດເຫຼົ້າ ແລະ ຢາສູບ | 110,37 | 111,67 | 113,35 | 115,89 | 121,72 |
| 3. ໝວດເຄື່ອງນຸ່ງຮົ່ມ ແລະ ເກີບ | 120,30 | 122,48 | 124,93 | 128,30 | 136,00 |
| 4. ໝວດທີ່ພັກອາໃສ, ນໍ້າປະປາ, ໄຟຟ້າ ແລະ ເຊື້ອເພີງ | 107,33 | 109,21 | 111,21 | 113,53 | 121,79 |
| 5. ໝວດເຄື່ອງໃຊ້ໃນເຮືອນ | 113,01 | 115,05 | 116,92 | 119,00 | 128,12 |
| 6. ໝວດການຮັກສາສຸຂະພາບ | 111,08 | 114,02 | 118,72 | 121,53 | 130,18 |
| 7. ໝວດຄົມມະນາຄົມ ແລະ ການຂົນສົ່ງ | 114,29 | 118,26 | 124,22 | 131,28 | 158,89 |
| 8. ໝວດໄປສະນີ ແລະ ໂທລະຄົມມະນາຄົມ | 112,31 | 112,86 | 113,30 | 114,28 | 119,18 |
| 9. ໝວດການບັນເທີງ ແລະ ການພັກຜ່ອນ | 104,96 | 105,53 | 106,19 | 106,85 | 111,53 |
| 10. ໝວດການສຶກສາ | 103,24 | 103,82 | 103,31 | 103,32 | 106,35 |
| 11. ໝວດຮ້ານອາຫານ ແລະ ໂຮງແຮມ | 107,39 | 110,68 | 112,11 | 114,02 | 121,32 |
| 12. ໝວດສິນຄ້າ ແລະ ການບໍລິການອື່ນໆ | 122,30 | 127,35 | 129,59 | 133,72 | 149,51 |

**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.
**ໝາຍເຫດ:** ທຽບຖານເດືອນ 12/2015 = 100

# ຕາຕະລາງທີ 2. ອັດຕາເງິນເຟີ້ (Inflation Rate)

| ໝວດສິນຄ້າ | ໄຕມາດ 2/2021 | ໄຕມາດ 3/2021 | ໄຕມາດ 4/2021 | ໄຕມາດ 1/2022 | ໄຕມາດ 2/2022 |
|---|---|---|---|---|---|
| **ເງິນເຟີ້ລວມ** | **3,58** | **4,22** | **5,01** | **7,37** | **15,45** |
| **ເງິນເຟີ້ລວມ, ບໍ່ລວມນໍ້າມັນເຊື້ອໄຟ** | **3,19** | **3,92** | **4,42** | **6,53** | **13,94** |
| **ເງິນເຟີ້ລວມ, ບໍ່ລວມອາຫານສົດ** | **3,90** | **5,13** | **7,28** | **9,43** | **20,48** |
| **ເງິນເຟີ້ລວມ, ບໍ່ລວມນໍ້າມັນເຊື້ອໄຟ ແລະ ອາຫານສົດ** | **3,10** | **4,39** | **6,02** | **7,73** | **17,45** |
| **ອັດຕາເງິນເຟີ້ແຕ່ລະໝວດສິນຄ້າ (%)** | | | | | |
| 1. ໝວດສະບຽງອາຫານ ແລະ ເຄື່ອງດື່ມບໍ່ແມ່ນເຫຼົ້າ | 3,27 | 3,43 | 2,74 | 5,25 | 10,29 |
| 2. ໝວດເຫຼົ້າ ແລະ ຢາສູບ | 4,45 | 5,31 | 6,06 | 6,98 | 10,28 |
| 3. ໝວດເຄື່ອງນຸ່ງຮົ່ມ ແລະ ເກີບ | 3,21 | 3,96 | 4,67 | 6,60 | 13,05 |
| 4. ໝວດທີ່ພັກອາໃສ, ນໍ້າປະປາ, ໄຟຟ້າ ແລະ ເຊື້ອເພີງ | 2,37 | 3,52 | 5,21 | 6,60 | 13,48 |
| 5. ໝວດເຄື່ອງໃຊ້ໃນເຮືອນ | 3,14 | 3,94 | 4,80 | 5,67 | 13,36 |
| 6. ໝວດການຮັກສາສຸຂະພາບ | 1,93 | 3,54 | 7,45 | 9,54 | 17,19 |
| 7. ໝວດຄົມມະນາຄົມ ແລະ ການຂົນສົ່ງ | 5,06 | 6,80 | 11,78 | 16,05 | 39,03 |
| 8. ໝວດໄປສະນີ ແລະ ໂທລະຄົມມະນາຄົມ | 8,94 | 3,57 | 2,31 | 2,37 | 6,12 |
| 9. ໝວດການບັນເທີງ ແລະ ການພັກຜ່ອນ | 1,03 | 1,23 | 1,55 | 1,69 | 6,26 |
| 10. ໝວດການສຶກສາ | 1,59 | 0,87 | -0,30 | 0,06 | 3,01 |
| 11. ໝວດຮ້ານອາຫານ ແລະ ໂຮງແຮມ | 1,89 | 5,59 | 7,56 | 8,87 | 12,97 |
| 12. ໝວດສິນຄ້າ ແລະ ການບໍລິການອື່ນໆ | 8,18 | 7,76 | 7,84 | 10,33 | 22,5 |

**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

**ໝາຍເຫດ:** ທຽບຖານເດືອນ 12/2015 = 100

## ຕາຕະລາງທີ 3. ຖານະການເງິນຂອງທະນາຄານແຫ່ງ ສປປ ລາວ
## (Balance Sheets of the BOL)

ຫົວໜ່ວຍ/Unit: (ຕື້ກີບ/Billion LAK)

| ລາຍການ | ໄຕມາດ 2/2021 | ໄຕມາດ 3/2021 | ໄຕມາດ 4/2021 | ໄຕມາດ 1/2022 | ໄຕມາດ 2/2022 |
|---|---|---|---|---|---|
| **ຊັບສິນຕ່າງປະເທດສຸດທິ** | **10.383,96** | **9.844,50** | **11.796,28** | **12.719,02** | **16.275,47** |
| ຊັບສິນຕ່າງປະເທດ | 11.077,27 | 11.961,86 | 14.145,16 | 15.147,21 | 19.267,46 |
| ໜີ້ສິນຕ່າງປະເທດ | -693,31 | -2.117,36 | -2.348,88 | -2.428,19 | -2.992,00 |
| **ຊັບສິນພາຍໃນສຸດທິ** | **23.882,67** | **25.046,10** | **28.214,28** | **29.060,15** | **27.349,59** |
| **ສິນເຊື່ອພາຍໃນສຸດທິ** | **18.683,93** | **19.834,23** | **23.345,78** | **22.944,69** | **24.703,38** |
| ສິນເຊື່ອໃຫ້ລັດຖະບານສຸດທິ | 1.152,84 | 1.211,72 | 3.129,46 | 2.953,31 | 2.981,77 |
| ສິນເຊື່ອໃຫ້ລັດຖະບານ | 2.271,37 | 2.735,42 | 5.025,96 | 5.450,06 | 6.023,34 |
| ເງິນຝາກລັດຖະບານ | -1.118,53 | -1.523,70 | -1.896,50 | -2.496,74 | -3.041,57 |
| ສິນເຊື່ອໃຫ້ພາກສ່ວນເສດຖະກິດ | 6.308,88 | 6.478,29 | 6.907,50 | 6.608,50 | 7.765,47 |
| ສິນເຊື່ອໃຫ້ລັດວິສາຫະກິດ | 6.308,88 | 6.478,29 | 6.907,50 | 6.608,50 | 7.765,47 |
| ສິນເຊື່ອໃຫ້ສະຖາບັນການເງິນ | 11.222,21 | 12.144,22 | 13.308,82 | 13.382,88 | 13.956,14 |
| ພັນທະບັດທະນາຄານກາງ | -1.668,83 | -1.753,97 | -2.250,96 | -1.871,60 | -5.343,49 |
| ລາຍການອື່ນໆສຸດທິ | 6.867,58 | 6.965,84 | 7.119,46 | 7.987,06 | 7.989,70 |
| **ຖານເງິນຕາ** | **34.266,63** | **34.890,60** | **40.010,56** | **41.779,18** | **43.625,06** |
| ເງິນສົດຢູ່ຂອດຈໍລະຈອນ | 11.551,69 | 11.936,99 | 13.386,49 | 12.970,61 | 12.187,85 |
| ເງິນຝາກ | 22.714,94 | 22.953,61 | 26.624,07 | 28.808,57 | 31.437,21 |
| ເງິນຝາກກະແສລາຍວັນ | 19.628,85 | 19.585,66 | 22.607,01 | 24.479,98 | 26.104,05 |
| ເງິນແຮຝາກບັງຄັບ | 2.752,00 | 2.881,72 | 3.420,32 | 3.550,58 | 5.119,28 |
| ທຶນຈົດທະບຽນຂອງ ທທກ | 242,50 | 407,59 | 512,10 | 733,75 | 169,83 |
| ເງິນຝາກຂອງພາກສ່ວນອື່ນໆ | 91,59 | 78,64 | 84,64 | 44,26 | 44,05 |

**ແຫຼ່ງຂໍ້ມູນ:** ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.

## ຕາຕະລາງທີ 4. ຖານະການເງິນຂອງທະນາຄານທຸລະກິດ (Commercial Banks' Survey)

ຫົວໜ່ວຍ/Unit: (ຕື້ກີບ/Billion LAK)

| ລາຍການ | ໄຕມາດ 2/2021 | ໄຕມາດ 3/2021 | ໄຕມາດ 4/2021 | ໄຕມາດ 1/2022 | ໄຕມາດ 2/2022 |
|---|---|---|---|---|---|
| **ຊັບສິນຕ່າງປະເທດສຸດທິ** | **-11.421,40** | **-7.354,95** | **-7.354,80** | **-6.757,14** | **-10.163,11** |
| ຊັບສິນຕ່າງປະເທດ | 18.957,89 | 23.232,45 | 23.609,84 | 24.367,66 | 27.893,01 |
| ໜີ້ສິນຕ່າງປະເທດ | -30.379,29 | -30.587,41 | -30.964,64 | -31.124,80 | -38.056,12 |
| **ຄັງສະສົມສຸດທິ** | **39.831,71** | **40.121,21** | **45.849,94** | **48.863,71** | **55.452,56** |
| ຄັງສະສົມ | 46.758,17 | 47.303,75 | 53.396,44 | 56.769,25 | 64.206,99 |
| ເງິນກູ້ຢືມຈາກ ທຫລ | -6.926,47 | -7.182,54 | -7.546,50 | -7.905,54 | -8.754,43 |
| **ສິນເຊື່ອໃຫ້ລັດຖະບານສຸດທິ** | 7.655,85 | 9.363,89 | 16.376,72 | 13.698,11 | 12.541,64 |
| ເປັນສະກຸນເງິນກີບ | 8.236,77 | 10.187,77 | 17.708,34 | 14.992,77 | 13.905,55 |
| ເປັນສະກຸນເງິນຕາຕ່າງປະເທດ | -580,91 | -823,87 | -1.331,62 | -1.294,66 | -1.363,92 |
| **ຊັບສິນພາຍໃນສຸດທິ (ຍົກເວັ້ນສິນເຊື່ອໃຫ້ລັດຖະບານ)** | **73.563,64** | **75.811,19** | **73.278,07** | **81.877,08** | **101.611,05** |
| ສິນເຊື່ອໃຫ້ພາກສ່ວນເສດຖະກິດ | 78.272,81 | 80.506,90 | 87.298,64 | 93.590,78 | 112.590,86 |
| ເປັນສະກຸນເງິນຕາຕ່າງປະເທດ | 39.461,80 | 41.756,82 | 45.397,87 | 50.607,41 | 66.122,17 |
| ສິນເຊື່ອໃຫ້ພາກເອກະຊົນ | 72.399,89 | 74.558,97 | 79.963,20 | 85.733,12 | 103.560,16 |
| ເປັນສະກຸນເງິນຕາຕ່າງປະເທດ | 34.060,30 | 36.264,79 | 39.122,63 | 44.043,68 | 58.512,98 |
| ສິນເຊື່ອໃຫ້ພາກສ່ວນລັດວິສາຫະກິດ | 5.872,92 | 5.947,93 | 7.335,43 | 7.857,65 | 9.030,69 |
| ເປັນສະກຸນເງິນຕາຕ່າງປະເທດ | 5.401,50 | 5.492,03 | 6.275,24 | 6.563,73 | 7.609,18 |
| **ຊັບສິນອື່ນໆສຸດທິ** | **-4.709,17** | **-4.695,71** | **-14.020,57** | **-11.713,70** | **-10.979,80** |
| **ເງິນຝາກລູກຄ້າ** | **109.629,80** | **117.941,33** | **128.149,93** | **137.681,75** | **159.442,14** |
| ເປັນເງິນກີບ | 48.847,64 | 50.680,67 | 52.754,54 | 54.194,80 | 55.000,24 |
| ເປັນສະກຸນເງິນຕາຕ່າງປະເທດ | 60.782,17 | 67.260,66 | 75.395,39 | 83.486,95 | 104.441,90 |

**ແຫຼ່ງຂໍ້ມູນ:** ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.

# ຕາຕະລາງທີ 5. ຖານະການເງິນຂອງລະບົບທະນາຄານ (Monetary Survey)

ຫົວໜ່ວຍ/Unit: (ຕື້ກີບ/Billion LAK)

| ລາຍການ | ໄຕມາດ 2/2021 | ໄຕມາດ 3/2021 | ໄຕມາດ 4/2021 | ໄຕມາດ 1/2022 | ໄຕມາດ 2/2022 |
|---|---|---|---|---|---|
| **ຊັບສິນຕ່າງປະເທດສຸດທິ** | **-1.037,44** | **2.489,54** | **4.441,48** | **5.961,87** | **6.112,35** |
| ຊັບສິນຕ່າງປະເທດ | 30.035,16 | 35.194,31 | 37.755,01 | 39.514,87 | 47.160,48 |
| ໜີ້ສິນຕ່າງປະເທດ | -31.072,60 | -32.704,77 | -33.313,52 | -33.552,99 | -41.048,12 |
| **ຊັບສິນພາຍໃນສຸດທິ** | **119.086,09** | **124.463,16** | **134.282,81** | **141.517,57** | **162.546,17** |
| **ສິນເຊື່ອພາຍໃນ** | **93.390,38** | **97.560,80** | **113.712,31** | **116.850,70** | **135.879,73** |
| ສິນເຊື່ອໃຫ້ລັດຖະບານສຸດທິ | 8.808,69 | 10.575,61 | 19.506,18 | 16.651,42 | 15.523,40 |
| ສິນເຊື່ອໃຫ້ລັດຖະບານ | 12.821,25 | 14.823,34 | 25.026,42 | 23.726,00 | 24.099,13 |
| ເງິນຝາກລັດຖະບານ | -4.012,55 | -4.247,73 | -5.520,25 | -7.074,58 | -8.575,73 |
| ສິນເຊື່ອໃຫ້ພາກສ່ວນເສດຖະກິດ | 84.581,69 | 86.985,19 | 94.206,14 | 100.199,28 | 120.356,33 |
| ສິນເຊື່ອໃຫ້ລັດວິສາຫະກິດ | 12.181,80 | 12.426,22 | 14.242,93 | 14.466,16 | 16.796,17 |
| ສິນເຊື່ອໃຫ້ພາກເອກະຊົນ | 72.399,89 | 74.558,97 | 79.963,20 | 85.733,12 | 103.560,16 |
| ລາຍການອື່ນໆສຸດທິ | 25.695,71 | 26.902,36 | 20.570,50 | 24.666,87 | 26.666,44 |
| **ປະລິມານເງິນຕາມຄວາມໝາຍກວ້າງ** | **118.048,65** | **126.952,70** | **138.724,30** | **147.479,46** | **168.658,52** |
| **ປະລິມານເງິນຄວາມໝາຍແຄບ** | **14.726,21** | **15.352,59** | **17.740,61** | **17.132,61** | **16.335,81** |
| ເງິນຢູ່ນອກລະບົບທະນາຄານ | 8.327,26 | 8.932,73 | 10.489,79 | 9.753,51 | 9.172,34 |
| ເງິນຝາກກະແສລາຍວັນ | 6.398,94 | 6.419,86 | 7.250,82 | 7.379,10 | 7.163,47 |
| **ປະລິມານເງິນປະເພດອື່ນໆ** | **103.322,44** | **111.600,11** | **120.983,68** | **130.346,85** | **152.322,71** |
| ເງິນຝາກປະຢັດ ແລະ ຝາກມີກຳນົດ | 42.540,27 | 44.339,45 | 45.588,30 | 46.859,90 | 47.880,81 |
| ເງິນຝາກເປັນເງິນຕາຕ່າງປະເທດ | 60.782,17 | 67.260,66 | 75.395,39 | 83.486,95 | 104.441,90 |

**ແຫຼ່ງຂໍ້ມູນ:** ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.

# ຕາຕະລາງທີ 6. ຊັບສິນຂອງທະນາຄານທຸລະກິດ (Assets of Commercial Banks)

ຫົວໜ່ວຍ/Unit: (ຕື້ກີບ/Billion LAK)

| ລາຍການ | ໄຕມາດ 2/2021 | ໄຕມາດ 3/2021 | ໄຕມາດ 4/2021 | ໄຕມາດ 1/2022 | ໄຕມາດ 2/2022 |
|---|---|---|---|---|---|
| ທະນາຄານທຸລະກິດລັດ + ທະນາຄານສະເພາະກິດ | | | | | |
| **ຍອດຊັບສິນ (ຕື້ກີບ)** | **77.500,21** | **82.267,24** | **96.952,91** | **79.754,75** | **89.940,49** |
| ອັດຕາສ່ວນ (%) | 43,88 | 44,15 | 46,49 | 35,79 | 35,02 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 2,96 | 6,15 | 17,85 | -17,74 | 12,77 |
| ທະນາຄານຮ່ວມທຶນ | | | | | |
| **ຍອດຊັບສິນ (ຕື້ກີບ)** | **14.194,89** | **14.929,72** | **16.219,62** | **42.818,17** | **47.942,01** |
| ອັດຕາສ່ວນ (%) | 8,04 | 8,01 | 7,78 | 19,22 | 18,66 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 0,12 | 5,18 | 8,64 | 163,99 | 11,97 |
| ທະນາຄານເອກະຊົນ | | | | | |
| **ຍອດຊັບສິນ (ຕື້ກີບ)** | **35.432,60** | **37.507,17** | **40.413,66** | **43.753,43** | **51.810,98** |
| ອັດຕາສ່ວນ (%) | 20,06 | 20,13 | 19,38 | 19,64 | 20,17 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 4,70 | 5,85 | 7,75 | 8,26 | 18,42 |
| ທະນາຄານສາຂາຕ່າງປະເທດ | | | | | |
| **ຍອດຊັບສິນ (ຕື້ກີບ)** | **49.475,94** | **51.632,49** | **54.955,82** | **56.495,16** | **67.162,90** |
| ອັດຕາສ່ວນ (%) | 28,02 | 27,71 | 26,35 | 25,35 | 26,15 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 3,08 | 4,36 | 6,44 | 2,80 | 18,88 |
